# ຄວາມຮັກຄືຫຍັງ?

ສິ່ງທີ່ມະນຸດຊອກຫາຫຼາຍທີ່ສຸດກໍຄື ຄວາມຮັກ. ໃຜໆກໍຢາກເປັນທີ່ຮັກຫອມຂອງຄົນອື່ນໆມີຄຳກ່າວໄວ້ວ່າ:

*"ຄວາມຮັກ ເປັນເຄື່ອງປະຄັບປະຄອງຄ້ຳຊູໂລກ ຄວາມຮັກບໍ່ມີເສັ້ນພົມແດນ, ບໍ່ເລືອກຊັ້ນວັນນະ ແລະ ບໍ່ມີສິ່ງຂວາງກັ້ນໄດ້ ເພາະມັນເປັນລັກສະນະສາກົນ".*

ຄວາມຮັກ ມີຢູ່ຫຼາຍປະເພດດ້ວຍກັນ.



## ຄວາມຮັກທີ່ແທ້ຈິງ

ຄວາມຮັກທີ່ແທ້ຈິງອັນເປັນຄວາມຮັກທີ່ພຣະຜູ້ສ້າງສັບພະທຸກສິ່ງໄດ້ມີຕໍ່ພວກເຮົາທຸກໆຄົນ. ພວກເຮົາເກີດຄວາມຊາບຊຶ້ງໃນ ຄວາມຮັກອັນຍິ່ງໃຫຍ່ ນີ້ໄດ້ຢ່າງໃດ?

ຂໍ້ຄວາມອັນເປັນທີ່ໜ້າຈັບໃຈຂໍ້ໜຶ່ງທີ່ ພຣະເຢຊູເຈົ້າໄດ້ກ່າວໄວ້ຄື:

"ບໍ່ມີໃຜຈະມີຄວາມຮັກອັນຍິ່ງໃຫຍ່
ເກີນກວ່າຜູ້ທີ່ສະລະຊີວິດຂອງຕົນ
ເພື່ອມວນມະນຸດໄດ້".



ຄວາມຮັກ ທີ່ກ່າວເຖິງນີ້ເປັນຄວາມຮັກຂອງພຣະເຈົ້າທີ່ໄດ້ຊົງມີຕໍ່ພວກເຮົາ ຈົນເຖິງກັບວ່າໄດ້ສະລະສົ່ງພຣະບຸດອົງດຽວຂອງພຣະອົງລົງມາເພື່ອໃຫ້ເປັນທາງຍົກເອົາບາບກຳທັງໝົດອອກຈາກພວກເຮົາ.

ຫຼັງຈາກນັ້ນມາບໍ່ທັນພໍເທົ່າໃດມື້ ພຣະເຢຊູເຈົ້າກໍໄດ້ຖືກພວກທະຫານໂຣມັນປະຫານຊີວິດພຣະອົງຢູ່ເທິງໄມ້ກາງແຂນ. ທັງນີ້ກໍເພື່ອຈະໄດ້ສະແດງໃຫ້ຊາວໂລກເຫັນດ້ວຍຕາຢ່າງຊັດເຈນວ່າພຣະເຢຊູເຈົ້າໄດ້ມາຍັງແຜ່ນດິນໂລກນີ້.

ພວກເຮົາບໍ່ສົມຄວນຈະໄດ້ຖືກຍົກໂທດບາບກຳຕ່າງໆທີ່ພຣະເຢຊູຄຣິດເຈົ້າໄດ້ຊົງຮັບເອົາໄປແທນພວກເຮົານັ້ນເລີຍ ທັງໆທີ່ວ່າສິ່ງນີ້ກໍເປັນສິ່ງໜຶ່ງທີ່ພຣະເຈົ້າໄດ້ກະທຳລົງໄປ.



ຖ້າຫາກມີຄວາມຮັກຂອງພຣະເຈົ້າຝັງຢູ່ໃນຈິດໃຈຂອງເຮົາ ແລ້ວຄວາມຮັກອັນນີ້ແຫຼະຈະຊ່ວຍໃຫ້ພວກເຮົາຕັດບັນຫາດັ່ງກ່າວນີ້ໃຫ້ສູນສິ້ນໄປ ແລະ ໄດ້ຄວາມຮັກທີ່ພວກເຮົາຕ້ອງການທີ່ສຸດໃນຊີວິດຂອງພວກເຮົາ.

## ຄຳຖາມທີ່ວ່າ ຄວາມຮັກ ຄືຫຍັງກັນແທ້?

ນັ້ນກໍຈະສາມາດຮຽນຮູ້ໄດ້ຈາກ ຄວາມຮັກ ອັນບໍຣິສຸດທີ່ປາສະຈາກຄວາມເຫັນແກ່ຕົວຂອງອົງພຣະຜູ້ເປັນເຈົ້າທີ່ມີຕໍ່ພວກເຮົາ ອັນເປັນຄວາມຮັກຊະນິດດຽວທີ່ຊ່ວຍປະຄັບປະຄອງໂລກຂອງເຮົາໃຫ້ດຳເນີນໄປດ້ວຍດີຕະຫຼອດມາ.

*ເລື່ອງນີ້ຂຽນໄວ້ໃນພຣະຄຳພີສັກສິດຂອງຄຣິສຕຽນ*



## ຄວາມຮັກ ຂອງໜຸ່ມສາວ

ຄວາມຮັກຂອງໜຸ່ມສາວ ຄືຄວາມຮັກທີ່ໄປທາງຄວາມຮັກໄຄ່ເລື່ອງຊູ້ສາວ. ຄວາມຮັກປະເພດນີ້ສືບເນື່ອງມາຈາກການຖືກຕາຕ້ອງໃຈຊຶ່ງກັນແລະກັນ ເກີດອາລົມຮັກໄຄ່ຫຼົງໄຫຼຍາກທີ່ຈະບັນລະຍາຍໃຫ້ຖືກໄດ້.



## ຄວາມຮັກ ຂອງພໍ່ແມ່ທີ່ມີຕໍ່ລູກ

ຄວາມຮັກປະເພດນີ້ເປັນສິ່ງທີ່ປະເສີດບໍ່ມີທີ່ປຽບ ເປັນສິ່ງທີ່ຊ່ວຍຊູໃຫ້ລູກໆຈະເລີນເຕີບໂຕ ເປັນເຄື່ອງຄອຍໃຫ້ຄວາມທຸ່ນທ່ຽງຕໍ່ອາລົມຂອງລູກໆ.





## ຄວາມຮັກ ຊາດ

ຄວາມຮັກປະເພດນີ້ກໍຄືຮັກເພື່ອນຮ່ວມຊາດຂອງຕົນທຸກຄົນ.

## ຄວາມຮັກ ທີ່ແທ້ຈິງ



ຄວາມຮັກທີ່ແທ້ຈິງຈະຕ້ອງເຕັມໄປດ້ວຍຄວາມອົດທົນ ແລະ ມີຄວາມເມດຕາ, ກາລຸນາ, ບໍ່ອິດສາຣິດສະຫຍາ, ບໍ່ເຫັນແກ່ຕົວ, ບໍ່ໂກດແຄ້ນ. ຄວາມຮັກຈະຕ້ອງຮູ້ຈັກໃຫ້ອະໄພ, ບໍ່ເຫັນດ້ວຍໃນສິ່ງທີ່ບໍ່ຖືກຕ້ອງ ແຕ່ເຫັນດ້ວຍຍິນດີໃນສັດຈະທຳຄວາມຈິງ. ຄວາມຮັກບໍ່ເຄີຍຮູ້ຈັກກັບຄຳວ່າທໍ້ຖອຍ ມີແຕ່ຄວາມເຊື່ອໝັ້ນ, ຄວາມຫວັງ ແລະ ຄວາມອົດທົນຕະຫຼອດໄປ.



ໂດຍຜ່ານທາງພຣະບຸດຂອງພຣະອົງໃນແບບທີ່ວ່າບໍ່ປາດຖະໜາຈະຮັບຜົນຕອບແທນອັນໃດເລີຍ.

ເຖິງປານນັ້ນແລ້ວ ພວກເຮົາກໍຍັງບໍ່ພາກັນສຳນຶກໃນສິ່ງເຫຼົ່ານີ້, ຖ້າເມື່ອໃດພວກເຮົາຍອມຮັບເອົາຄວາມຈິງນີ້ແລ້ວ ພວກເຮົາກໍຈະໄດ້ຊື່ວ່າເປັນບຸດຂອງພຣະເຈົ້າ ແລ້ວພຣະອົງກໍຈະໄດ້ສວມຄວາມຮັກຂອງພຣະອົງເອງໃຫ້ເກີດມີຂຶ້ນໃນຈິດໃຈຂອງພວກເຮົາ.



ພຣະເຢຊູເຈົ້າໄດ້ຊົງສັ່ງສອນໃຫ້ພວກເຮົາມີຄວາມຈິງຮັກພັກດີຕໍ່ອົງພຣະຜູ້ເປັນເຈົ້າດ້ວຍຫົວໃຈອັນເຕັມລົ້ນຕະຫຼອດທັງຈິດໃຈ ແລະ ຈິດວິນຍານເທົ່ານັ້ນຍັງບໍ່ພໍ ພວກເຮົາຄວນຈະຕ້ອງຮັກຄົນອື່ນໆເທົ່າກັນກັບເຮົາຮັກຕົວຂອງເຮົາເອງອີກດ້ວຍ

ຄຳວ່າ “ຮັກຄົນອື່ນ” ໃນທີ່ນີ້ໝາຍເຖິງເຮົາຄວນຖືວ່າຄົນອື່ນມີຄວາມສຳຄັນກວ່າຕົວເອງ ຕາບໃດທີ່ເຮົາຍັງຖືວ່າຕົນເອງເປັນຄົນທີ່ “ໂດດເດັ່ນ” ເໜືອຜູ້ອື່ນຢູ່ແລ້ວ ຕາບນັ້ນ ເຮົາກໍຈະປາສະຈາກຄວາມຮັກທີ່ເຮົາມີຕໍ່ຜູ້ອື່ນຢູ່ ເພາະວ່າເຮົາຈະມົວເມົາແຕ່ຄິດເຖິງຜົນປະໂຫຍດ ແລະ ເລື່ອງສ່ວນຕົວກ່ອນອື່ນໝົດ.